**ປະເພດການໃຫ້ບໍລິການຄຸ້ມຄອງດ້ານການເງິນໃຫ້ແກ່**
**ຜູ້ເຂົ້າຮ່ວມໂຄງການທີ່ໃຫ້ສິດການຕັດສິນໃຈດ້ວຍຕົນເອງ**

ຕາມທີ່ໄດ້ປຶກສາຫາລືກັນໃນ ຄໍາຖາມທີ່ຖາມເລື້ອຍໆກ່ຽວກັບ ການບໍລິການຄຸ້ມຄອງການເງິນ (FMS FAQs) ຢູ່ໃນເວບໄຊທ໌ຂອງພະແນກ, ຜູ້ເຂົ້າຮ່ວມແຕ່ລະຄົນໃນໂຄງການໃຫ້ສິດການຕັດສິນໃຈດ້ວຍຕົນເອງ ຕ້ອງໃຊ້ຜູ້ໃຫ້ບໍລິການຄຸ້ມຄອງການເງິນ(FMS) ທີ່ຂາຍຢູ່ສູນປະຈໍາພາກພື້ນ. ຜູ້ໃຫ້ບໍລິການ FMS ມີສາມປະເພດ: 1. ຕົວແທນຈັດເກັບເງິນ ຫຼື ຕົວແທນດ້ານງົບປະມານ, ຮູບແບບນີ້ຖືກນໍາໃຊ້ເມື່ອສິນຄ້າ ຫຼື ການບໍລິການຊື້ຈາກທຸລະກິດ; 2. ນາຍຈ້າງທີ່ຮ່ວມງານ, ຮູບແບບນີ້ແມ່ນໃຊ້ເມື່ອຜູ້ເຂົ້າຮ່ວມຕ້ອງການແບ່ງປັນບົດບາດ ແລະ ຄວາມຮັບຜິດຊອບຂອງນາຍຈ້າງບາງສ່ວນກັບ FMS ແລະ 3. ນາຍຈ້າງຈໍາກັດຜູ້ດຽວ, ເຊິ່ງເອີ້ນກັນວ່າ ເປັນຕົວແທນງົບປະມານ/ນາຍຈ້າງ), ຮູບແບບນີ້ຖືກນໍາໃຊ້ເມື່ອຜູ້ເຂົ້າຮ່ວມຕ້ອງການເປັນນາຍຈ້າງໂດຍກົງຂອງຜູ້ທີ່ໃຫ້ບໍລິການເຫຼົ່ານັ້ນ.

ຕາຕະລາງນີ້ສະແດງໃຫ້ເຫັນວິທີການແບ່ງວຽກງານ ແລະ ຄວາມຮັບຜິດຊອບລະຫວ່າງທ່ານ ແລະ ຜູ້ໃຫ້ບໍລິການ FMS ຂອງທ່ານ.

| | **ປະເພດຂອງຮູບແບບໃນ FMS** | | |
|---|---|---|---|
| **ໜ້າວຽກ** | **ຜູ້ຈ່າຍໃບບິນ** | **ນາຍຈ້າງຮ່ວມງານ** | **ນາຍຈ້າງຈໍາກັດຜູ້ດຽວ** |
| **ຈ່າຍຄ່າສິນຄ້າ ແລະ ການບໍລິການຕ່າງໆທີ່ລະບຸໄວ້ໃນແຜນການໃຊ້ຈ່າຍຂອງທ່ານຈາກທຸລະກິດອື່ນ ຫຼື ຜູ້ຂາຍ** | **FMS** | **FMS** | **FMS** |
| **ຜູ້ທີ່ຈ້າງບຸກຄົນທີ່ໃຫ້ບໍລິການແກ່ທ່ານແມ່ນໃຜ?** | | | |
| • ຕັດສິນໃຈທັກສະທີ່ຈໍາເປັນ | **ບໍ່ກ່ຽວຂ້ອງ** | **ທ່ານ ກັບ ການຊ່ວຍເຫລືອຈາກ FMS** | **ທ່ານ ກັບ ການຊ່ວຍເຫລືອຈາກ FMS** |
| • ຕັດສິນໃຈຄ່າຈ້າງ ແລະ ຜົນປະໂຫຍດ | **ບໍ່ກ່ຽວຂ້ອງ** | **ທ່ານ ແລະ FMS** | **ທ່ານ ກັບ ການຊ່ວຍເຫລືອຈາກ FMS** |
| • ສໍາພາດຜູ້ສະໝັກ | **ບໍ່ກ່ຽວຂ້ອງ** | **ທ່ານ** | **ທ່ານ** |

| | | | |
|---|---|---|---|
| • ກວດສອບການມີສິດໄດ້ຮັບຂອງຜູ້ອອກແຮງງານສໍາລັບຄຸນສົມບັດໃນການຈ້າງງານ | **ບໍ່ກ່ຽວຂ້ອງ** | **ທ່ານ ແລະ** FMS | **ທ່ານ ແລະ** FMS |
| • ຕັດສິນໃຈຜູ້ທີ່ຈະຈ້າງຄົນທີ່ເຮັດວຽກໃຫ້ແກ່ທ່ານ | **ບໍ່ກ່ຽວຂ້ອງ** | **ທ່ານ ແລະ** FMS | **ທ່ານ ກັບການຊ່ວຍເຫລືອຈາກ** FMS |
| • ຈັດແຈງການກວດສອບປະຫວັດທີ່ຈໍາເປັນ ດັ່ງທີ່ໄດ້ອະທິບາຍໄວ້ໃນ [ຄໍາແນະນໍາກ່ຽວກັບການກວດສອບປະຫວັດຂອງຜູ້ໃຫ້ບໍລິການໃນການໃຫ້ສິດຕັດສິນໃຈກັບຕົວເອງ] | **ບໍ່ກ່ຽວຂ້ອງ** | FMS **ແລະ ຄົນງານທີ່ທ່ານຕ້ອງການຈ້າງ** | FMS **ແລະ ຄົນງານທີ່ທ່ານຕ້ອງການຈ້າງ** |
| • ຢືນຢັນຜູ້ໃຫ້ບໍລິການທີ່ໄດ້ຜ່ານການກວດສອບປະຫວັດ | **ບໍ່ກ່ຽວຂ້ອງ** | FMS | FMS |
| | **ປະເພດຂອງ** FMS | | |
| **ໜ້າວຽກ** | **ຜູ້ຈ່າຍໃບບິນ** | **ນາຍຈ້າງຮ່ວມງານ** | **ນາຍຈ້າງຈໍາກັດຜູ້ດຽວ** |
| **ນາຍຈ້າງແມ່ນໃຜ?** | **ທຸລະກິດ/ຜູ້ຂາຍທີ່ສະໜອງສິນຄ້າ/ການບໍລິການ** | **ທ່ານ ແລະ** FMS | **ທ່ານ** |
| **ການກໍາກັດດູແລ ແລະ ການອະນຸມັດຕາຕະລາງບັນທຶກມື້ເຮັດວຽກ** | | | |
| • ກໍານົດຕາຕະລາງໃຫ້ຄົນງານ | **ບໍ່ກ່ຽວຂ້ອງ** | **ທ່ານ** | **ທ່ານ** |
| • ຊີ້ນໍາວຽກງານ | **ບໍ່ກ່ຽວຂ້ອງ** | **ທ່ານ** | **ທ່ານ** |
| • ອະນຸມັດຕາຕະລາງບັນທຶກເວລາ | **ບໍ່ກ່ຽວຂ້ອງ** | **ທ່ານ** | **ທ່ານ** |
| **ຄ່າຈ້າງຄົນງານ ແລະ ພາສີ** | | | |
| • ຈ່າຍຄ່າແຮງງານໃຫ້ຄົນງານ | **ບໍ່ກ່ຽວຂ້ອງ** | FMS | FMS |
| • ຈ່າຍຄ່າພາສີລັດຖະບານທີ່ຕ້ອງຈ່າຍ | **ບໍ່ກ່ຽວຂ້ອງ** | FMS | FMS |
| • ຮັບເວກລາຍງານການຈ່າຍພາສີ | **ບໍ່ກ່ຽວຂ້ອງ** | FMS | **ທ່ານ** |
| • ຍື່ນລາຍງານການເກັບພາສີທັງໝົດ | **ບໍ່ກ່ຽວຂ້ອງ** | FMS | FMS |
| **ການປະກັນໄພ ແລະ ການປະຕິບັດຕາມ** | | | |
| • ຮັບການປະກັນຄວາມຮັບຜິດຊອບ | **ບໍ່ກ່ຽວຂ້ອງ** | FMS | **ທ່ານ** |
| • ຮັບການປະກັນຄ່າຕອບແທນຂອງຄົນງານ | **ບໍ່ກ່ຽວຂ້ອງ** | FMS | **ທ່ານ** |

| | | | |
|---|---|---|---|
| • ຮັບປະກັນການປະຕິບັດຕາມກົດໝາຍວ່າດ້ວຍການຈ້າງງານ | **ບໍ່ກ່ຽວຂ້ອງ** | **ທ່ານ ແລະ FMS** | **ທ່ານ ແລະ FMS** |
| • ກວດສອບການບໍລິການທີ່ເປັນຂອງ HCBS ໃຫ້ສອດຄ່ອງກັບເອກະສານຈາກ RC ກ່ອນການຈ່າຍເງິນ | **ບໍ່ກ່ຽວຂ້ອງ** | **FMS** | **FMS** |
| **ຄຸ້ມຄອງງົບປະມານ** | | | |
| • ເຮັດໃຫ້ແນ່ໃຈວ່າຜູ້ເຂົ້າຮ່ວມມີເງິນທຶນຕະຫຼອດທັ້ງປີ. | **ທ່ານ ແລະ FMS** | **ທ່ານ ແລະ FMS** | **ທ່ານ ແລະ FMS** |
| • ສະໜອງບົດລາຍງານລາຍຈ່າຍປະຈຳເດືອນໃຫ້ຜູ້ເຂົ້າຮ່ວມ ແລະ ຜູ້ປະສານງານດ້ານການບໍລິການ | **FMS** | **FMS** | **FMS** |

ສູນປະຈຳພາກພື້ນສາມາດໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບປະເພດຂອງຜູ້ໃຫ້ບໍລິການ FMS. ບັນຊີລາຍຊື່ຂອງຜູ້ໃຫ້ບໍລິການ FMS ແມ່ນມີຢູ່ໃນ ເວບໄຊທ໌ສະໜອງ ລາຍຊື່ຜູ້ຕິດຕໍ່ FMS. ນອກຈາກນີ້, ສູນປະຈຳເຂດຂອງທ່ານສາມາດຊ່ວຍທ່ານຊອກຫາຜູ້ໃຫ້ບໍລິການ FMS. ຜູ້ເຂົ້າຮ່ວມ ແລະ ຄອບຄົວຂອງພວກເຂົາຄວນພິຈາລະນາປຶກສາກັບຫຼາຍກວ່າໜຶ່ງຜູ້ໃຫ້ການບໍລິການ FMS ກ່ຽວກັບການບໍລິການຂອງພວກເຂົາ.

ຄ່າໃຊ້ຈ່າຍແກ່ການບໍລິການ FMS ແມ່ນຈະຍົກມາເຈລະຈາລະຫວ່າງຜູ້ເຂົ້າຮ່ວມ ແລະ ຜູ້ໃຫ້ບໍລິການ FMS, ແຕ່ອາດຈະບໍ່ເກີນ ອັດຕາສູງສຸດ ທີ່ເຜີຍແຜ່ລົງໃນເວບໄຊທ໌ຂອງພະແນກພັດທະນາການບໍລິການ. ຄ່າໃຊ້ຈ່າຍສຳລັບການບໍລິການເຫຼົ່ານີ້ແມ່ນໄດ້ຈ່າຍຈາກງົບປະມານສະເພາະຂອງຜູ້ເຂົ້າຮ່ວມ; ເຖິງຢ່າງໃດກໍ່ຕາມ, ງົບປະມານຂອງແຕ່ລະຄົນບໍ່ສາມາດເພີ່ມໄດ້ ເພື່ອຊ່ວຍຄ່າໃຊ້ຈ່າຍຂອງ FMS.